# ຄະນະ 3 ອົງການຈັດຕັ້ງມະຫາຊົນ ສາຂາ ທຫລ ພາກກາງ
# ເຄື່ອນໄຫວວຽກງານຢູ່ຫ້ອງການຊາວໜຸ່ມແຂວງສະຫວັນນະເຂດ



ເພື່ອປະຕິບັດຕາມແຜນການເຄື່ອນໄຫວວຽກງານຂະບວນການປີ2017 ພາຍໃຕ້ການຊີ້ນຳ-ນຳພາຂອງສະຫາຍເລຂາໜ່ວຍພັກ ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ໃຫ້ປະກົດຜົນເປັນຈິງ ແລະ ບັນລຸຕາມຄາດ ໝາຍທີ່ວາງໄວ້.

ຕອນເຊົ້າ ວັນທີ 23 ມັງກອນ 2017, ທີ່ຫ້ອງການຊາວໜຸ່ມແຂວງສະຫວັນນະເຂດທີ່ຜ່ານມາ, ໄດ້ຈັດຝຶກອົບຮົມແລກປ່ຽນບົດຮຽນ ນຳສະເໜີ ພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ, ຄວາມຮູ້ພື້ນຖານກ່ຽວກັບວຽກງານສະຖາບັນການເງິນ, ການນຳໃຊ້ແຊັກ/ການກວດກາເງິນປອມ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງ ເງິນຕາຕ່າງປະເທດ, ຮ້ານ ແລກປ່ຽນ ພາຍໃຕ້ການຄຸ້ມຄອງຂອງ ສາຂາ ທຫລ ພາກກາງ; ມີຜູ້ເຂົ້າຮ່ວມທັງໝົດ 23 ສະຫາຍ ຍິງ 13 ສະຫາຍ.



ທີ່ປະຊຸມໄດ້ຮັບຟັງການເຜີຍແຜ່ກ່ຽວກັບພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງພະແນກໆ ໃຫ້ແກ່ບັນດາສະຫາຍສະມາຊິກຂອງ 3 ອົງການຈັດຕັ້ງມະຫາຊົນ ຂອງຊາວໜຸ່ມແຂວງສະຫວັນນະເຂດ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ກັບພາລະບົດບາດ ຂອງທະນາຄານແຫ່ງ ສປປ ລາວ ເວົ້າລວມ, ເວົ້າສະເພາະແມ່ນ ຂອບເຂດ ການຄຸ້ມຄອງ ຂອງສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ຕະຫຼອດໄລຍະຂອງການດຳເນີນການເຜີຍແຜ່ ແລກປ່ຽນບົດຮຽນດັ່ງກ່າວເຫັນວ່າຜູ້ເຂົ້າຮ່ວມກໍ່ຄືສະຫາຍສະມາຊິກຊາວໜຸ່ມແຂວງສະຫວັນນະເຂດໄດ້ໃຫ້ຄວາມສົນໃຈ, ເອົາໃຈໃສ່ຮັບຟັງການນຳສະເໜີຈາກພະແນກກ່ຽວຂ້ອງເປັນຢ່າງດີ ແລະ ມີຄຳຖາມເຈາະຈີ້ມແລກປ່ຽນບົດຮຽນຕະຫລອດການບັນຍາຍ ດ້ວຍບັນຍາກາດອັນຟົດຟື້ນ ແລະ ເບີກບານມ່ວນຊື່ນ.



ກອງປະຊຸມເຜີຍແຜ່ ແລກປ່ຽນຄວາມຮູ້ ໄດ້ອັດລົງໃນວັນດຽວກັນ ດ້ວຍຜົນສໍາເລັດອັນຈົບງາມ.

**ຂ່າວ-ພາບ:** ໄຊຍະສັກ ສີຫາພົມ